ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 074 /ທຄຕລ 2021
ນະຄອນຫຼວງວຽງຈັນ, ວັນທີ: 12 AUG 2021

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ, ຫ້າງຮ້ານທີ່ຜະລິດ ແລະ ສະໜອງເຈ້ຍທິສຊູ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມປະມູນລາຄາເຈ້ຍທິສຊູ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍສິນຄ້າ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ/ຫໍ່ | ມູນຄ່າ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ເຈ້ຍທິສຊູກໍ້ມ້ວນໃຫຍ່ | 1 | | ຄັດຕິດຕົວຢ່າງສິນຄ້າພ້ອມ ( ໃຫ້ຮ້ານລະບຸຍີ່ຫໍ້, ຄວາມຍາວ, ປະເພດຜະລິດ) |
| 2 | ເຈ້ຍທິສຊູເຊັດມື | 1 | | |
| 3 | ເຈ້ຍທິສຊູ ເປັນກັບ | 1 | | |

❖ **ເງື່ອນໄຂຂອງຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

- ສຳເນົາໃບອະນຸຍາດດຳເນີນທຸລະກິດ.
- ສຳເນົາໃບຢັ້ງຢືນການມອບພັນທະອາກອນຢ່າງໜ້ອຍ ປີ 2019.
- ມີໃບຢັ້ງຢືນການເປັນຕົວແທນຈຳໜ່າຍຢ່າງຖືກຕ້ອງ.
- ໃຫ້ສະເໜີລາຄາເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10% ແລະ ລະບຸໄລຍະເວລາໃນການຈັດສົ່ງສິນຄ້າຈັກວັນລັດຖະການຫຼັງໄດ້ຮັບໃບສັ່ງຊື້.
- ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

**ໝາຍເຫດ:** ກະລຸນາສົ່ງເອກະສານທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ຊ້າສຸດບໍ່ໃຫ້ກາຍ ວັນທີ: 19/08/2021 ເວລາ 14.00 ໂມງ ທີ່ປ່ອງບໍລິການ ຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.

ດັ່ງນັ້ນ, ຈິ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈຍື່ນຊອງສະເໜີລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**
**ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ສາຍຈິດ ສິນມະວົງ**